# *ຜູ້ໃຫ້ຄຳປຶກສາໃນການຝຶກງານ*

## 1. ການກຳນົດຜູ້ໃຫ້ຄຳປຶກສາໃນການຝຶກງານ, ບັນຊີລາຍຊື່ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ

ຜູ້ສະໝັກຈົດທະບຽນເປັນນັກຝຶກງານ ເພື່ອເປັນນັກຊ່ຽວຊານບັນຊີ ຕ້ອງຮັບຜິດຊອບໃນການກຳນົດຜູ້ໃຫ້ຄຳປຶກສາໃນການຝຶກງານຂອງຕົນ.

ຖ້າຜູ້ສະໝັກບໍ່ສາມາດຊອກຜູ້ໃຫ້ຄຳປຶກສາໃນການຝຶກງານ ພາຍຫຼັງທີ່ຕົນໄດ້ພະຍາຍາມຢ່າງສົມເຫດສົມຜົນແລ້ວ, ຕົນອາດສະເໜີຂໍຝຶກງານ ພາຍໃຕ້ການຄວບຄຸມ ຂອງຜູ້ຊ່ວຍຜູ້ຄວບຄຸມການຝຶກງານໃດໜຶ່ງ ຊຶ່ງຈະຮັບບົດບາດເປັນຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ.

ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ ຕ້ອງຖືກຄັດເລືອກຈາກບັນຊີລາຍຊື່ ທີ່ຄະນະກຳມະການຝຶກອົບຮົມໄດ້ສ້າງຂຶ້ນ. ໃນກໍລະນີດັ່ງກ່າວ, ນັກຝຶກງານເປັນນັກຊ່ຽວຊານບັນຊີ ພ້ອມດ້ວຍຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກຂອງຕົນ ຕ້ອງກຳນົດຍຸດທະສາດ ທີ່ຖືກປັບ ເພື່ອໃຫ້ໄດ້ຮັບລະດັບຄວາມຊຳນານງານທີ່ຈຳເປັນ ໃນສະພາບການເຮັດວຽກຂອງເຂົາເຈົ້າ.

## 2. ສະຖານະ ແລະ ບົດບາດຂອງຜູ້ໃຫ້ຄຳປຶກສາໃນການຝຶກງານ

ຜູ້ໃຫ້ຄຳປຶກສາໃນການຝຶກງານ ແມ່ນນັກຊ່ຽວຊານບັນຊີ ທີ່ໃຫ້ການຊີ້ນຳກ່ຽວກັບການພັດທະນາຄວາມສາມາດຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ອຳນວຍຄວາມສະດວກໃນການພັດທະນາຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິຂອງວິຊາຊີບນີ້.

ຜູ້ໃຫ້ຄຳປຶກສາໃນການຝຶກງານ ຕ້ອງໃຫ້ການຮ່ວມມືຢ່າງໃກ້ຊິດກັບນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ຮູ້ຈັກຄຸນນະພາບວຽກງານຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ.

ຜູ້ໃຫ້ຄຳປຶກສາໃນການຝຶກງານ ຕ້ອງຢູ່ບ່ອນເຮັດວຽກດຽວກັນກັບນັກຝຶກງານເປັນນັກຊ່ຽວຊານບັນຊີ.

## 3. ໜ້າທີ່ຂອງຜູ້ໃຫ້ຄຳປຶກສາໃນການຝຶກງານ

ຜູ້ໃຫ້ຄຳປຶກສາໃນການຝຶກງານມີໜ້າທີ່ດັ່ງນີ້:

1. ຮ່ວມມືກັບນັກຝຶກງານເປັນນັກຊ່ຽວຊານບັນຊີ ໃນການກຳນົດຍຸດທະສາດໃນການສ້າງລະດັບຄວາມຊຳ ນານງານທີ່ຈຳເປັນ ຕາມກຳນົດໃນມາດຕາ 32 ຂອງລະບຽບການສະບັບນີ້ ຕະຫຼອດໄລຍະເວລາ ຂອງການຝຶກງານ;
2. ກຳນົດເວລາທີ່ພຽງພໍ ເພື່ອໃຫ້ຕົນສາມາດຊີ້ນຳນັກຝຶກງານ ໃນການສ້າງລະດັບຄວາມຊຳນານງານທີ່ຈຳເປັນໃນຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ຂອງສາຍງານໃນການຝຶກງານເປັນນັກຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້;
3. ປະຊຸມກັບນັກຝຶກງານ ເພື່ອສົນທະນາກ່ຽວກັບການພັດທະນາຄວາມສາມາດ ຕາມທີ່ໄດ້ຈົດບັນທຶກໃນແບບຟອມການຝຶກງານປະຈຳປີ ຕາມກຳນົດໃນມາດຕາ 33 ຂອງລະບຽບການສະບັບນີ້ ຢ່າງໜ້ອຍ ສອງຄັ້ງຕໍ່ປີ;
4. ຮ່ວມມື ແລະ ປະສານງານກັບຜູ້ຄວບຄຸມການຝຶກງານ ແລະ ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ;
5. ຢືນຢັນກຳນົດເວລາທີ່ກ່ຽວພັນ ທີ່ຕ້ອງໄດ້ພິຈາລະນາໃນການຄິດໄລ່ໄລຍະການຝຶກງານໃຫ້ຄົບ 36 ເດືອນ;

6. ຊ່ວຍນັກຝຶກງານເປັນນັກຊ່ຽວຊານບັນຊີ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກການສ້າງສາຍພົວພັນດ້ານວິຊາຊີບ ຜ່ານ ປະສົບການ ແລະ ຄວາມເຂົ້າໃຈ ຂອງສະພາບແວດລ້ອມຂອງການເຮັດວຽກດັ່ງກ່າວ ຂອງຕົນ.

## 4. ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ

ນັກຝຶກງານເປັນນັກຊ່ຽວຊານບັນຊີ ອາດປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານຂອງຕົນ ໃນໄລຍະດຳເນີນການຝຶກງານ ຖ້າ ຕົນເຫັນວ່າຈຳເປັນ ເພື່ອບັນລຸລະດັບຄວາມຊຳນານງານທີ່ຈຳເປັນ ໃນຂົງເຂດຄວາມສາມາດດ້ານວິຊາຊີບ ຂອງຂອບຂ່າຍ ຄວາມສາມາດ ຕາມກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້.

ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ ຕ້ອງບໍ່ຄັດຈັງຫວະໃນການຝຶກງານ.

ກ່ອນມື້ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານມີຜົນບັງຄັບໃຊ້, ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງລາຍງານການ ປ່ຽນ ຜູ້ໃຫ້ຄຳປຶກສາໃນການຝຶກງານ ໃຫ້ແກ່ຜູ້ຄວບຄຸມການຝຶກງານ. ນັກຝຶກງານດັ່ງກ່າວ ຕ້ອງຊີ້ແຈງໃນບົດລາຍງານ ເຫດຜົນການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ ແລະ ມື້ຂອງການປ່ຽນດັ່ງກ່າວ. ບົດລາຍງານນີ້ ຕ້ອງສົ່ງພາຍໃນ 30 ມື້ ກ່ອນມື້ຂອງການປ່ຽນແປງດັ່ງກ່າວ.